**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ...05.../ຈຂອປ
ອັດຕະປື, ວັນທີ...01.ມ.ສ..2024

# ຄຳສັ່ງ
## ວ່າດ້ວຍການຄຸ້ມຄອງ ແລະ ເກັບກູ້ນຳໃຊ້ເຄື່ອງປ່າຂອງດົງ (ປະເພດໝາກຈອງບານ)

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;

## ເຈົ້າແຂວງ ອອກຄຳສັ່ງ:

1. ຫ້າມບຸກຄົນ, ນິຕິບຸກຄົນ, ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດທັງພາຍໃນແລະຕ່າງປະເທດເກັບກູ້ໝາກຈອງບານແບບດັບສູນ, ບໍ່ຖືກວິທີ ເຊັ່ນ: ການຕັດຕົ້ນ, ການຂຶ້ນໄປສັ່ນ, ຮ່ານງ່າ ແລະ ໃຊ້ລວດຮັດໃຫ້ຕົ້ນໝາກຈອງຕາຍ, ຖ້າຫາກວ່າພົບເຫັນໃຫ້ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ;
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງສົມທົບກັບຂະແໜງການກ່ຽວຂ້ອງຂອງແຂວງ ແລະ ເມືອງ ເພື່ອຄົ້ນຄວ້າຫົວໜ່ວຍທຸລະກິດທີ່ເຫັນວ່າມີຄວາມເໝາະສົມ, ແລ້ວອອກຂໍ້ຕົກລົງຮັບຮອງ ແລະ ອະນຸຍາດຕາມລະບຽບກົດໝາຍ, ພ້ອມທັງແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງການເກັບກູ້, ຊື້-ຂາຍ ແລະ ສ້າງສັນຍາ, ມາດຕະການ ຮ່ວມກັບຜູ້ປະກອບການ (ສັນຍາຕ້ອງໄດ້ຈົດທະບຽນສານ);
3. ບັນດາບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ເກັບກູ້, ເກັບຊື້ເຄື່ອງປ່າຂອງດົງປະເພດໝາກຈອງບານ, ຕ້ອງໄດ້ປະຕິບັດຕາມສັນຍາເກັບກູ້, ເກັບຊື້ຮ່ວມກັບເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຕ້ອງເກັບຊື້ຕາມການຈັດປະເພດໝາກຈອງທີ່ໄດ້ຄຸນນະພາບ ຢ່າງເຂັ້ມງວດຄື:
   - ການເກັບກູ້, ເກັບຊື້ໝາກຈອງບານພາຍໃນຂອບເຂດບ້ານທີ່ໄດ້ຮັບອະນຸຍາດ ແລະ ທ້ອນໂຮມໄວ້ໃນຈຸດທີ່ພາກລັດກຳນົດໃຫ້;
   - ຫ້າມລັກລອບການຊື້-ຂາຍ ແບບບໍ່ໄດ້ຮັບການອານຸຍາດ ຫຼື ບໍ່ມີການເສຍພັນທະອາກອນຕ່າງໆ;
   - ຫ້າມຊື້-ຂາຍໝາກຈອງບານດິບ ແລະ ໝາກຈອງບານຕົກເກດ (ໝາກຈອງສົ້ມເອົາ, ໝາກຈອງບໍ່ລົ່ນແບບທຳມະຊາດ);
   - ຫ້າມລັກລອບເຄື່ອນຍ້າຍໝາກຈອງບານຈາກບ້ານ, ເມືອງ ແລະ ແຂວງໂດຍບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ;
   - ຫ້າມບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນເຂົ້າມາດຳເນີນການສຳຫຼວດ ແລະ ຈັບຈອງເຂດປ່າໝາກຈອງບານເດັດຂາດ, ຖ້າບໍ່ໄດ້ຮັບອານຸຍາດພາກສ່ວນກ່ຽວຂ້ອງຂອງລັດ;
4. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຊຸກຍູ້ຕິດຕາມການເກັບກູ້, ເກັບຊື້ໝາກ, ເຄື່ອນຍ້າຍໝາກຈອງບານ ໃຫ້ຖືກຕາມລະບຽບກົດໝາຍ ຢ່າງເຂັ້ມງວດ;

5. ມອບໃຫ້ເມືອງ ສົມທົບກັບບ້ານດຳເນີນການຄຸ້ມຄອງ ໃນເຂດຮັບຜິດຊອບຂອງຕົນ ຖ້າພົບເຫັນຜູ້ກະທຳຜິດໃຫ້ດຳເນີນຕາມກົດລະບຽບບ້ານ ແລະ ກົດໝາຍບ້ານເມືອງ ( ສຳລັບເງິນຄ່າປັບໄໝ ແລະ ຄ່າຄຸ້ມຄອງແມ່ນເອົາເຂົ້າເປັນກອງທຶນບ້ານ );
6. ມອບໃຫ້ກອງກວດກາປ່າໄມ້ແຂວງ, ເມືອງ ແລະ ຂະແໜງການກ່ຽວຂ້ອງ ສະກັດກັ້ນການເຄື່ອນຍ້າຍ ແລະ ສົ່ງອອກໝາກຈອງບານໂດຍບໍ່ໄດ້ຮັບອະນຸຍາດ ຢູ່ໃນແຕ່ລະດ່ານຈຸດກວດກາຊັບພະຍາກອນປ່າໄມ້ຢ່າງເຂັ້ມງວດ;
7. ທຸກພາກສ່ວນຂະແໜງການຂັ້ນແຂວງ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ປະຊາຊົນບັນດາເຜົ່າທີ່ອາໄສຢູ່ແຂວງອັດຕະປື ແລະ ນັກທຸລະກິດ ຈົ່ງຮັບຮູ້ ແລະ ເຂົ້າໃຈ ພ້ອມທັງຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ, ໃນກໍລະນີຜູ້ໃດຫາກລະເມີດຕໍ່ແຈ້ງການສະບັບນີ້ ຈະຖືກປັບໃໝ ແລະ ດຳເນີນຄະດີຕາມລະບຽບກົດໝາຍ.
8. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອັດຕະປື

ເຈົ້າແຂວງ

**ພທ ວັນທອງ ກອງມະນີ**

ບ່ອນນຳສົ່ງ:

| | |
|---|---|
| - ພະແນກກະສິກຳ ແລະ ປ່າໄມ້ແຂວງ | 01 ສະບັບ; |
| - ຫ້ອງວ່າການແຂວງ | 01 ສະບັບ; |
| -ຫ້ອງວ່າການເມືອງ 5 ຕົວເມືອງ | 01 ສະບັບ; |
| - ພະແນກອຸດສາຫະກຳ ແລະ ການຄ້າແຂວງ | 01 ສະບັບ; |
| - ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ 5 ຕົວເມືອງ | 01 ສະບັບ; |
| - ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ 5 ຕົວເມືອງ | 01 ສະບັບ; |
| - ຜູ້ປະກອບການ, ບໍລິສັດ | 01 ສະບັບ; |
| - ເກັບຮັກສາໄວ້ | 01 ສະບັບ; |